ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ຄະນະສະເພາະກິດ

ເລກທີ 012 /ສພກ.ນວ

ວັນທີ 04 ມິຖຸນາ 2021

# ແຈ້ງການ

## ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການປ້ອງກັນ ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID -19 ຢູ່ນະຄອນຫຼວງວຽງຈັນ ໄລຍະວັນທີ 05 ຫາ 19 ມິຖຸນາ 2021

ຮຽນ: - ທົ່ວໜ້າກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ;

- ເຈົ້າເມືອງ ແລະ ນາຍບ້ານ ທົ່ວນະຄອນຫຼວງວຽງຈັນ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ ນະຄອນຫຼວງວຽງຈັນ.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 595/ຫສນຍ, ລົງວັນທີ 04 ມິຖຸນາ 2021 ກ່ຽວກັບການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໄລຍະວັນທີ 05 ຫາ 19 ມິຖຸນາ 2021;
- ອີງຕາມ ຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 313/ຈນວ, ລົງວັນທີ 21 ພຶດສະພາ 2021.

ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜ່ານການຈັດຕັ້ງປະຕິບັດມາດຕະການຕ່າງໆ ຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ, ບັນດາຂະແໜງການຂັ້ນສູນກາງ ແລະ ນະຄອນຫຼວງວຽງຈັນ ໃນຜ່ານມາ ເຫັນວ່າການຈັດຕັ້ງທຸກຂັ້ນ, ທຸກພາກສ່ວນ ລວມທັງພາກລັດ, ທຸລະກິດ ແລະ ສັງຄົມ ລ້ວນແຕ່ໄດ້ປະຕິບັດໜ້າທີ່ ແລະ ພັນທະຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ມີທ່າອ່ຽງຫຼຸດລົງ. **ແຕ່ເຖິງຢ່າງໃດກໍ່ຕາມ ສະພາບການລະບາດ ກໍ່ຍັງສືບຕໍ່ແຜ່ລາມໃນຊຸມຊົນເປັນວົງກວ້າງ** ເຊິ່ງເຮັດໃຫ້ການຄວບຄຸມ ແລະ ສະກັດກັ້ນ ມີຄວາມຫຍຸ້ງຍາກຂຶ້ນ. ດັ່ງນັ້ນ, ຄະນະສະເພາະກິດ ນະຄອນຫຼວງວຽງຈັນ ຈຶ່ງຈຳເປັນຕ້ອງສືບຕໍ່ປະຕິບັດບັນດາມາດຕະການ ທີ່ໄດ້ລະບຸໄວ້ໃນຄຳສັ່ງ ສະບັບເລກທີ 15/ນຍ, ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 595/ຫສນຍ, ແຈ້ງການກະຊວງສາທາລະນະສຸກ ສະບັບເລກທີ 0488/ສທ, ແຈ້ງການຂອງນະຄອນຫຼວງວຽງຈັນ ສະບັບເລກທີ 002/ຈນວ ແລະ ແຈ້ງການຕ່າງໆຂອງບັນດາກະຊວງ ເພື່ອສືບຕໍ່ປະຕິບັດມາດຕະການໃນການຄວບຄຸມ, ສະກັດກັ້ນການແຜ່ລະບາດຂອງພະຍາດ COVID-19 ແລະ ຜ່ອນຜັນບາງມາດຕະການ ຢູ່ນະຄອນຫຼວງວຽງຈັນ ດັ່ງນີ້:

**1. ມາດຕະການສືບຕໍ່**

1) ເພີ່ມທະວີການຊອກຫາຜູ້ຕິດເຊື້ອມາປິ່ນປົວ, ຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອ ແລະ ກຸ່ມສ່ຽງ ມາເກັບຕົວຢ່າງກວດຫາເຊື້ອ, ເພີ່ມການສັກວັກຊີນໃຫ້ເປົ້າໝາຍຕ່າງໆ ໃຫ້ໄດ້ຕາມຄາດໝາຍ ແລະ ເພີ່ມທະວີຄວາມເຂັ້ມງວດໃນ

ການປະຕິບັດມາດຕະການ ປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຄື: ວັດແທກອຸນຫະພູມ, ຮັກສາໄລຍະຫ່າງ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນໍ້າສະອາດ ໃສ່ສະບູ ຫຼື ເຈວລ້າງມື;

2) ປິດຮ້ານກິນ-ດື່ມ, ຮ້ານຄາຣາໂອເກະ, ສະຖານບັນເທີງ, ສວນອາຫານ, ສວນນໍ້າ, ສະຖານທີ່ທ່ອງທ່ຽວ, ຮ້ານນວດ-ສະປາ, ຮ້ານເສີມສວຍ, ຮ້ານອິນເຕີເນັດຄາເຟ, ຮ້ານເກມທຸກປະເພດ;
3) ປິດຮ້ານສະນຸກເກີ້, ສັງວຽນຕີໄກ່, ສູນອອກກຳລັງກາຍ, ສູນກິລາໃນຮົ່ມທຸກປະເພດ ແລະ ຫ້າມຫຼິ້ນກິລາປະເພດ ທີ່ຮ່າງກາຍມີການສຳຜັດກັນ ເຊັ່ນ: ບານເຕະ, ຕີມວຍ ແລະ ອື່ນໆ ທີ່ມີຄວາມສ່ຽງຕໍ່ການແຜ່ເຊື້ອ;
4) ສືບຕໍ່ປິດການຮຽນ-ການສອນ ຢູ່ສະຖາບັນການສຶກສາທຸກຊັ້ນທຸກສາຍ, ແຕ່ໃຫ້ສືບຕໍ່ຈັດການຮຽນ-ການສອນທາງໄກແທນ;
5) ປິດບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫົວໜ່ວຍຫັດຖະກຳ ຢູ່ໃນເຂດ/ບ້ານແດງ; ຍົກເວັ້ນໂຮງງານທີ່ມີຫໍພັກແຮງງານ ຢູ່ໃນບໍລິເວນໂຮງງານຂອງຕົນ, ໂຮງງານຜະລິດສິນຄ້າບໍລິໂພກ, ຢາປົວພະຍາດ, ເຄື່ອງປ້ອງກັນການລະບາດ ແລະ ອຸປະກອນການແພດ ແຕ່ໃຫ້ມີການຄຸ້ມຄອງການປະຕິບັດມາດຕະການ ປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ ຢ່າງເຂັ້ມງວດ;
6) ຫ້າມບຸກຄົນເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດສູນກາງ, ນະຄອນຫຼວງວຽງຈັນ, ແຂວງ ແລະ ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ, ແຂວງ ດ້ວຍເງື່ອນໄຂ ແລະ ເຫດຜົນຈຳເປັນເຊັ່ນ: ໄປປະຕິບັດວຽກທາງລັດຖະການ, ໄປວຽກໂຄງການ, ໄປທຳການຜະລິດ, ໄປຂົນສົ່ງສິນຄ້າ-ສະບຽງອາຫານ, ກັບພູມລຳເນົາ, ກໍລະນີຍາດໃກ້ຊິດເຈັບເປັນ ຫຼື ເສຍຊີວິດ;
7) ຫ້າມບຸກຄົນເຂົ້າ-ອອກ ບ້ານທີ່ມີການຕິດເຊື້ອ (ບ້ານແດງ) ຫຼື ບ້ານທີ່ມີຄວາມສ່ຽງ (ບ້ານເຫຼືອງ) ຕາມການກຳນົດຂອງຄະນະສະເພາະກິດ ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງບ້ານ ດ້ວຍເງື່ອນໄຂ ແລະ ເຫດຜົນຈຳເປັນເຊັ່ນ: ໄປໂຮງໝໍ, ໄປຊື້ຢາປົວພະຍາດ, ໄປຮັບວັກຊີນ, ໄປເຮືອນດີ-ສົ່ງສະການ;
8) ຫ້າມໂຮມຊຸມນຸມ ຫຼື ຈັດກິດຈະກຳຕ່າງໆ ທີ່ມີຜູ້ເຂົ້າຮ່ວມຫຼາຍກວ່າ 50 ຄົນ;
9) ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່.

**2 ມາດຕະການຜ່ອນຜັນ:**

1) ສືບຕໍ່ອະນຸຍາດໃຫ້ເປີດສູນການຄ້າ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍ, ຊຸບເປີມາເກັດ, ມິນິມາດ, ຕະຫຼາດສົດ, ຕະຫຼາດຂາຍອາຫານ, ຮ້ານຕັດຜົມ ທີ່ບໍ່ຢູ່ໃນເຂດ/ບ້ານແດງບໍ່ໃຫ້ກາຍ 22:00 ໂມງ, ໂດຍໃຫ້ປະຕິບັດມາດຕະການ ປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ;
2) ສືບຕໍ່ອະນຸຍາດໃຫ້ຍ່າງອອກກຳລັງກາຍຕາມສະຖານທີ່ຕ່າງໆ ແລະ ຫຼິ້ນກິລາກາງແຈ້ງ ທີ່ຮ່າງກາຍບໍ່ໄດ້ສຳຜັດກັນ;
3) ອະນຸຍາດໃຫ້ເປີດຮ້ານຕັດຜົມ ທີ່ບໍ່ຢູ່ໃນເຂດ/ບ້ານແດງ ແຕ່ບໍ່ໃຫ້ລູກຄ້າແອອັດຢູ່ໃນຮ້ານ ແລະ ໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;
4) ອະນຸຍາດໃຫ້ນັ່ງກິນ, ດື່ມ ຢູ່ຮ້ານອາຫານ, ຮ້ານກາເຟ ທີ່ບໍ່ຢູ່ໃນເຂດ/ບ້ານແດງ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ, ແຕ່ບໍ່ໃຫ້ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ຢ່າງເດັດຂາດ;
5) ອະນຸຍາດໃຫ້ຈັດກອງປະຊຸມ ທີ່ມີຜູ້ເຂົ້າຮ່ວມບໍ່ເກີນ 50 ຄົນ ທີ່ບໍ່ຢູ່ເຂດ/ບ້ານແດງ ແລະ ຈັດພິທີກຳເຮືອນດີ-ສົ່ງສະການ ແຕ່ຕ້ອງປະຕິບັດມາດຕະການ ປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;
6) ອະນຸຍາດໃຫ້ນຳໃຊ້ເຮືອຫາປາ ຕາມລຳແມ່ນໍ້າຂອງ ໃນເວລາ 08:00-18:00 ໂມງ ໂດຍໃຫ້ກຳລັງ ປກຊ-ປກສ ສົມທົບກັບຄະນະສະເພາະກິດເມືອງ ອອກລະບຽບ, ຄຸ້ມຄອງຈຳນວນເຮືອເຂົ້າ-ອອກຝັ່ງ ແລະ ການເຄື່ອນໄຫວຂອງເຈົ້າຂອງເຮືອ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ;
7) ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກ ພາຍໃນນະຄອນຫຼວງວຽງຈັນ ແລະ ໄປຕ່າງແຂວງ ຜູ້ຂັບລົດ ແລະ ຜູ້ໂດຍສານ ຕ້ອງໄດ້ຮັບການສັກວັກຊີນຄົບ 2 ເຂັມ ໄດ້ໜຶ່ງເດືອນຂຶ້ນໄປ ແລະ ຕ້ອງປະຕິບັດຕາມມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;

**3. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ທີ່ລັດຖະບານ, ຄະນະສະເພາະກິດ, ກະຊວງ - ອົງການ ຂັ້ນສູນກາງ, ນະຄອນຫຼວງວຽງຈັນ ວາງອອກ ແມ່ນຈະຖືກປັບໄໝ ດັ່ງລຸ່ມນີ້:

- ບຸກຄົນລະເມີດ: ໃຫ້ປັບໄໝ ແຕ່ 100.000 - 1.000.000 ກີບ/ຄົນ/ຄັ້ງ;
- ນິຕິບຸກຄົນລະເມີດ: ໃຫ້ປັບໄໝ ແຕ່ 1.000.000 - 5.000.000 ກີບ/ນິຕິບຸກຄົນ/ຄັ້ງ;

ມອບໃຫ້ກໍາລັງ ປກສ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ ໂດຍເລີ່ມຈາກການສຶກສາອົບຮົມ, ປັບໄໝ ກ້າວໄປເຖິງດໍາເນີນຄະດີຕາມລະບຽບກົດໝາຍ ຕາມກໍລະນີ ແຕ່ເບົາ ຫາ ໜັກ.

**4.** ມອບໃຫ້ຄະນະສະເພາະກິດ, ກອງບັນຊາການ ປກຊ-ປກສ, ພະແນກການ - ອົງການທຽບເທົ່າພະແນກ, ເມືອງ ແລະ ບ້ານ ບັນຊາ, ອໍານວຍຄວບຄຸມ, ອອກລະບຽບການ, ເຮັດບົດບັນທຶກ ໃຫ້ບຸກຄົນ ແລະ ນິຕິບຸກຄົນ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮອງເຈົ້າຄອງນະຄອນຫຼວງວຽງຈັນ**
**ຫົວໜ້າຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ**
**ການລະບາດຂອງພະຍາດ COVID-19 ນວ**

**ພູວົງ ວົງຄໍາຊາວ**

**ບ່ອນສົ່ງ:**

| | |
|---|---|
| - ເລຂາ, ຮອງເລຂາ, ຄະນະປະຈໍາພັກ ນວ ສະຫາຍລະ | 01 ສະບັບ; |
| - ຄະນະສະເພາະກິດ ສູນກາງ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ; |
| - ກະຊວງ - ອົງການ ພາກສ່ວນລະ | 01 ສະບັບ; |
| - ຄະນະສະເພາະກິດ ນວ - ເມືອງ ພາກສ່ວນລະ | 01 ສະບັບ; |
| - ພະແນກການ, ອົງການລັດທຽບເທົ່າ ພາກສ່ວນລະ | 01 ສະບັບ; |
| - ເມືອງລະ | 01 ສະບັບ; |
| - ບ້ານລະ | 01 ສະບັບ. |